**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 17 ມັງກອນ 2009 (1-17-2010)**

---

## <u>ການຕໍ່ສູ້ກັບຄວາມບໍ່ເປັນທັມ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ປັນຍາຈານ 3:16-17; 4:1; 8:2-13)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ແມ່ນກ່ຽວກັບປະສົບການ ແລະການໂຕ້ຕອບຂອງຜູ້ທີ່ເຊື່ອ ທີ່ມີຕໍ່ຄົນບໍ່ທ່ຽງທັມທີ່ປະຕິບັດຕໍ່ຊຶ່ງກັນ ແລະກັນ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສໍາຄັນ?:</u>** ຄົນທີ່ມີປະສົບການກັບການກົດຂີ່ ກໍກາຍເປັນຜູ້ກົດຂີ່. ດັ່ງນັ້ນ, ພວກເຮົາຕ້ອງເຕືອນພວກເຮົາເອງ ໃນຄວາມຈໍາເປັນທີ່ຕ້ອງສະແດງອອກເຖິງພຣະຄຸນ ແລະການອະພັຍໂທດໃນການດໍາຣົງຊີວິດຂອງພວກເຮົາແຕ່ລະວັນ. ຄຣິສຕະຈັກແຕ່ລະໜ່ວຍຄວນຈະເປັນນາຍໜ້າແຫ່ງຄວາມຫວັງ ແລະຄວາມທ່ຽງທັມໃນຄຸ້ມເຂດທ້ອງຖິ່ນຂອງຕົນ ແລະໃນໂລກດ້ວຍ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ສ່ວນຫລາຍແລ້ວ ຊີວິດ ເຕັມໄປດ້ວຍຄວາມບໍ່ຍຸດຕິທັມ, ບົດຮຽນນີ້ຈະຊ່ວຍທ່ານໃຫ້ສໍາຣວດການໂຕ້ຕອບຕໍ່ຄວາມບໍ່ຍຸດຕິທັມໃນກຸ່ມຂອງທ່ານ ແລະກະຕຸ້ນທ່ານໃຫ້ກະທໍາການ ໂດຍພຣະຄຸນແລະທ່ຽງທັມໃນຊີວິດປະຈໍາວັນຂອງທ່ານ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນໍາຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈໍາຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສໍາຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນໍາ:</u>** ໃຫ້ຜູ້ເຖົ້າຜູ້ແກ່ເລົ່າເຖິງການດໍາຣົງຊີວິດທີ່ບໍ່ຍຸດຕິທັມ ແລະບໍ່ທ່ຽງທັມຂອງເຂົາເຈົ້າໃຫ້ຟັງຈັກໜ່ອຍ.

- ອີງຕາມການຄົ້ນພົບຂອງທາງແຫ່ງຊີວິດ (Lifeway) , ມີພຽງແຕ່ 8% ຂອງຄະນະບັບຕິສພາກໃຕ້ ຊຶ່ງບັນດາອາຈານເວົ້າວ່າ ຄຣິສຕະຈັກຂອງເຂົາເຈົ້າມີຄວາມເປັນຫ່ວງ ເປັນໄຍໃນການຕັດສິນທີ່ບໍ່ເປັນທັມໃນຮູບແບບໃໝ່ທີ່ອອກມານີ້. ແມ່ນຫຍັງທີ່ບັນດາຜູ້ທີ່ເຊື່ອໄດ້ຖືກສິ່ງຂັດຂວາງ ແລະບັນຫາຄວາມບໍ່ຍຸດຕິທັມຕໍ່ສູ້?
- ຜູ້ທີ່ເຊື່ອ ແລະຜູ້ບໍ່ເຊື່ອໄດ້ຮູ້ວ່າຄວາມບໍ່ຍຸດຕິທັມນັ້ນມັນໄດ້ກົດຂີ່ບັງຄັບແນວໃດ.

1. **<u>ສະຖານທີ່ຂອງຄວາມບໍ່ເປັນທັມ:</u>** (ປັນຍາຈານ 3:16-17)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 3:16-17

- ເປັນຫຍັງບັນດາຜູ້ທີ່ເຊື່ອຕ້ອງກະທຳດ້ວຍຄວາມຖືກຕ້ອງຍຸດຕິທັມ?
- ການທີ່ຮູ້ຈັກວ່າພຣະເຈົ້າຊົງຈະພິພາກສາຄົນຍຸດຕິທັມທັງຄົນບໍ່ຍຸຕິທັມ ແລະຄົນຊົ່ວຮ້າຍນັ້ນເປັນຄວາມສະບາຍ ຫລືເປັນທຸກກັງວົນ?
- ພວກຜູ້ເຖົ້າໄດ້ຕີລາຄາຄຸນຄ່ານິສັຍໃຈຄໍ ແລະການກະທຳຂອງເຂົາເຈົ້າໃຫ້ແນ່ໃຈວ່າເຂົາເຈົ້າບໍ່ໄດ້ທຳຄວາມຜິດ ແລະລະເມີດສິດຂອງຄົນອື່ນໂດຍວິທີໃດ?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ປັນຍາຈານ 3:16-17)

1. ທ່ານເຄີຍໄດ້ປະສົບການ ຫລືໄດ້ເຫັນຄວາມບໍ່ຍຸດຕິທັມໃນຊີວິດຂອງທ່ານຈັກເທື່ອບໍ່?
2. ທ່ານຈະດຳເນີນການຕໍ່ສູ້ ແລະຢືນໝັ້ນຕໍ່ຕ້ານຜ່ານຊີວິດຂອງທ່ານອອກຢ່າງໃດໄດ້? ທ່ານຢືນໝັ້ນຢູ່ບົນເສັ້ນທາງອັນທ່ຽງທັມ ແລະເປັນທັມໃນກິຈກັມຂອງທ່ານແຕ່ລະວັນໄດ້ແນວໃດ?
3. ແມ່ນອັນໃດທີ່ເປັນຄວາມບໍ່ຍຸດຕິທັມແທ້ຈິງທີ່ທ່ານເຫັນດ້ວຍ ຫລືບໍ່ສົນໃຈນຳ?

2. <u>**ອຳນາດແຫ່ງການກົດຂີ່ ຂົ່ມເຫງ:**</u> (ປັນຍາຈານ 4:1)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 4:1
- ໃຫ້ນັກຮຽນບອກເຣື່ອງການກະທຳທີ່ກົດຂີ່ຂົ່ມເຫັງທີ່ເຂົາເຈົ້າໄດ້ເຫັນຜ່ານມານັ້ນມີແນວໃດແດ່? ການເປັນພະຍານໃນການກົດຂີ່ຂົ່ມເຫັງຂອງກະສັດຊາໂລໂມນກໍມີຫລາຍປະການທີ່ເໝືອນກັນກັບພວກເຮົາທີ່ເຫັນຢູ່ທຸກມື້ນີ້.
- ເຮັດແນວໃດຄົນຂອງພຣະເຈົ້າຈຶ່ງຈະມີຄວາມສະດວກໃນການນຳເອົາເຣື່ອງຄວາມຍຸດຕິທັມນີ້ໄປສູ່ພວກຄົນທີ່ໄດ້ຮັບຄວາມບໍ່ຍຸດຕິທັມ ແລະຜູ້ທີ່ກຳລັງເຈັບປວດດ້ວຍເຣື່ອງນີ້?
- ເຮັດແນວໃດໂບດຂອງພວກເຮົາຈຶ່ງຕັ້ງໝັ້ນຢູ່ຢ່າງຍຸດຕິທັມ ເພື່ອໃຫ້ຄົນທີ່ຢູ່ໃນຄຸ້ເຂດຂອງພວກເຮົາເຫັນ ແລະແບ່ງປັນໃຫ້ເຂົາເຈົ້າເຂົ້າໃຈ ແລະກາຍມາເປັນຜູ້ປະຕິບັດຄວາມຍຸດຕິທັມໄດ້?

<u>**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> (ປັນຍາຈານ 4:1)

1. ຄວາມບໍ່ຍຸດຕິທັມ ຫລືຕົວຢ່າງຂອງອຳນາດແຫ່ງການກົດຂີ່ຂົ່ມເຫັງອັນໃດທີ່ທ່ານໄດ້ສັງເກດເຫັນໃນເຂດອ້ອມແອ້ມທ່ານ?
2. ທ່ານຈະໃຫ້ຄວາມຫວັງ ແລະຄວາມສະດວກແກ່ຜູ້ທີ່ຖືກກົດຂີ່ຂົ່ມເຫັງແນວໃດ?
3. ໃນຫ້ອງຮຽນຂອງທ່ານຈະເຮັດວຽກຢ່າງຄວາມຍຸດຕິທັມໃນຄຸ້ມເຂດຂອງທ່ານດ້ວຍວິທີໃດ?

3 . <u>**ຫລັກການຂອງການປະທ້ວງ:**</u> (ປັນຍາຈານ 8:2-9)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ປັນຍາຈານ 8:2-9
- ທ່ານເຫັນການປະທ້ວງທີ່ເປັນປໂຍດ ຫລືບໍ່ເປັນປໂຍດໃນຊີວິດຂອງທ່ານບໍ່?
- ມີທາງໃດແດ່ ໃນແຕ່ລະຍຸກ ແຕ່ລະສມັຍທີ່ໄດ້ດຳເນີນສືບຕໍ່ແກ້ໄຂປັບປຸງ ແນວທາງປະຕິບັດທີ່ບໍ່ໄດ້ຮັບອະນຸຍາດໃນການປະທ້ວງອັນບໍ່ຍຸດຕິທັມ?
- ໃນເມື່ອຜູ້ທີ່ເຊື່ອບໍ່ເຂົ້າຮ່ວມໃນການປະທ້ວງໂດຍສິ່ງທີ່ບໍ່ໄດ້ຮັບອະນຸຍາດໃນທາງໃດທາງໃດກໍດີ ພວກອາຈຸໂສສາມາດຊ່ອຍຢ່າງໃດໄດ້?
- ໃຫ້ສລຸບໂດຍຫຍໍ້ໃນ 4 ຈຸດນີ້ໂດຍການຂຽນໃສ່ກະດານ:

ກະສັດໂຊໂລໂມນໄດ້ແນະນຳສິ່ງທີ່ພວກເຮົາສຶກສາໃຫ້:

(1) ໃຫ້ດຳເນີນຊີວິດໃຫ້ຖືກຕ້ອງຢູ່ສເມີ.

(2) ໃຫ້ເປັນຄົນອົດທົນໃນການຊອກຫາຊ່ອງທາງຊ່ອຍເຫລືອຄົນອື່ນໆ.

(3) ໃຫ້ທຳຕາມຂໍ້ສັນຍາທີ່ໄດ້ຕົກລົງກັນແລ້ວຢ່າງສມ່ຳສເມີຊຶ່ງຄວາມປາຖນາຂອງພວກເຮົາແມ່ນຊ່ອຍບໍ່ໃຫ້ເກີດສິ່ງຊົ່ວຮ້າຍ.

(4) ໃຫ້ກຽດແກ່ອຳນາດການປົກຄອງ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ປັນຍາຈານ 8:2-9

1. ໃນເມື່ອພວກເຮົາບໍ່ເຫັນດີ ພວກເຮົາຄວນຈະຕອບສນອງຕໍ່ກົດຣະບຽບຂອງອຳນາດການປົກຄອງແນວໃດ?
2. ພວກເຮົາຈະສືບຕໍ່ເຊື່ອໄວ້ວາງໃຈໃນພຣະເຈົ້າໂດຍຜ່ານຜ່າຄວາມບໍ່ຍຸຕິທັມນີ້ໄດ້ຢ່າງໃດ ໃນເມື່ອບໍ່ເຫັນໃນການຕອບສນອງຈາກການປະທ້ວງເກີດຂຶ້ນ?

4.**<u>ການທັນກັບຄືນທີ່ຈະມີໃນພາຍໜ້າ:</u>** (ປັນຍາຈານ 8:10-13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ປັນຍາຈານ 8:10-13
- ທ່ານຈະເຫັນຄວາມຍຸຕິທັມ ແລະພຣະເຈົ້າເປັນຜູ້ທີ່ຖືກຕ້ອງທ່ຽງທັມ?
- ໃນທາງໃດທີ່ຄົນທັງຫລາຍຍັງສືບຕໍ່ ແລະຕ້ອງການໃຫ້ການປາກເວົ້າມີຄວາມຍຸຕິທັມ, ທັງທາງກົດໝາຍກໍເຫັນພ້ອມໃນການເຣື່ອງນີ້.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ປັນຍາຈານ 8:10-13)

1. ແມ່ນຫຍັງທີ່ເປັນຄວາມຫວັງ ຫລືຄຳສັນຍາຂອງພຣະທັມເຫລົ່ານີ້?
2. ເປັນຫຍັງພວກເຮົາຈຶ່ງຕ້ອງສືບຕໍ່ການຕໍ່ສູ້ກັບຄວາມບໍ່ຍຸດຕິທັມ?
3. ພວກເຮົາຈະຊ່ອຍຜູ້ໃຫ້ຜູ້ອື່ນໆມີຄວາມເຂົ້າໃຈວ່າການພິພາກສາກຳລັງຈະມາເຖິງນີ້ໄດ້?

**<u>ພຣະຄັມພີແຫ່ງຄວາມຈິງ</u>**

- ຄວາມອະທັມເກີດຂຶ້ນທຸກເມື່ອ ແລະບ່ອນໃດກໍໄດ້ ບໍ່ແມ່ນຄົນລ້ຽງມັນມາ ຊຶ່ງແມ່ນຜູ້ນຶ່ງທີ່ພຣະເຈົ້າຊົງສ້າງຂຶ້ນມາຕາມແບບລັກສະນະຂອງພຣະເຈົ້າ.
- ເມື່ອປະເຊີນໜ້າກັບການກົດຂີ່ຂົ່ມເຫັງ, ພວກເຮົາຕ້ອງທຳຕາມວິທີການແກ້ໄຂຂໍ້ຂ້ອງໃຈດ້ວຍທາງອັນເໝາະສົມ, ດ້ວຍການເຊື່ອໄວ້ວາງໃຈໃນພຣະເຈົ້າ ໃຫ້ຍອມຮັບການປ່ຽນແປງນັ້ນເປັນເວລາຂອງພຣະເຈົ້າ
- ໃນທີ່ສຸດ, ຄົນຊົ່ວອະທັມກໍຈະຖືກນຳມາຮວມກັນໄວ້ຕໍ່ໜ້າພຣະພັກພຣະເຈົ້າແລ້ວພຣະເຈົ້າຈະຊົງຕັດສິນພິພາກສາຢ່າງຍຸຕິທັມ ສຳລັບຜູ້ທີ່ຊອບທັມຈະຖືກຊົງສ້າງຂຶ້ນໃໝ່.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**